ຍິນດີ ຕ້ອນຮັບ ທ່ານ ມອນໄຊ ລາວມົວຊົ່ງ ເຂົ້າຢ້ຽມຢາມໂຄງການກໍ່ສ້າງອາຄານທ່ອງທ່ຽວ-ວັດທະນະທຳ ທ່ານໄດ້ຍ້ອງຍໍຊົມເຊີຍຕໍ່ ຄຸນນະພາບການກໍ່ສ້າງ ແລະ ເຫັນສຳເລັດໃນການກໍ່ສ້າງທີ່ຖືກຕ້ອງຕາມລະບຽບການ

ທ່ານ ມອນໄຊ ລາວມົວຊົ່ງ ຮອງປະທານສະພາແຫ່ງຊາດ, ກຳມະການສູນກາງພັກ, ພ້ອມດ້ວຍຄະນະ ເຂົ້າຢ້ຽມຢາມໂຄງການກໍ່ສ້າງອາຄານທ່ອງທ່ຽວ-ວັດທະນະທຳ ໂດຍໃຫ້ກຽດຕ້ອນຮັບຂອງ ທ່ານ ເນັຍ ເຫຼັຍ ປະທານ ກຸ່ມບໍລິສັດ ວັດທະນະທຳທ່ອງທ່ຽວລາວ ມະຫາຊົນ, ທ່ານ ພັນເອກ ວັນທອງ ສິດທິກຸມ ຜູ້ ອຳນວຍການໃຫຍ່ ລັດວິສາຫະກິດ ພກອ ພ້ອມດ້ວຍຜູ້ບໍລິຫານຂັ້ນສູງຂອງບໍລິສັດຢ່າງພ້ອມພຽງ.

ໂອກາດນີ້, ທ່ານ ມອນໄຊ ລາວມົວຊົ່ງ ໄດ້ກວດກາຄວາມຄືບໜ້າຂອງໂຄງການກໍ່ສ້າງ ເຊິ່ງໄດ້ເນັ້ນໃສ່ການກວດກາໂຄງສ້າງຫຼັກ, ເຕັກນິກການກໍ່ສ້າງ ແລະ ອື່ນ ໆ, ພ້ອມທັງມີການຍ້ອງຍໍຊົມເຊີຍຕໍ່ຄຸນນະພາບການກໍ່ສ້າງ, ການຖືກຕ້ອງຕາມກົດໝາຍ ແລະ ລະບຽບການໃນການດຳເນີນໂຄງການ, ແນວຄິດການອອກແບບ ແລະ ການຄວບຄຸມດ້ານຄວາມປອດໄພ.

ທ່ານ ພັນເອກ ວັນທອງ ສິດທິກຸມ ໄດ້ລາຍງານຕໍ່ ທ່ານ ມອນໄຊ ລາວມົວຊົ່ງ ກ່ຽວກັບຄວາມຄືບໜ້າລວມຂອງໂຄງການກໍ່ສ້າງອາຄານທ່ອງທ່ຽວ-ວັດທະນະທຳ ແລະ ໄດ້ແນະນຳຢ່າງລະອຽດ ກ່ຽວກັບການວາງແຜນໂຄງການ, ມາດຕະຖານການກໍ່ສ້າງ, ການຄັດເລືອກວັດສະດຸ, ລະບົບຄວບຄຸມຄຸນນະພາບ ແລະ ສະພາບ ການດຳເນີນເອກະສານຂໍອະນຸມັດຕ່າງໆຈາກພາກສ່ວນທີ່ກ່ຽວຂ້ອງ, ພ້ອມທັງອະທິບາຍກ່ຽວກັບແຜນການດຳເນີນງານໃນອະນາຄົດ, ການວາງຍຸດທະສາດດ້ານ ວັດທະນະທຳ ແລະ ການທ່ອງທ່ຽວອີກດ້ວຍ.

ຫຼັງຈາກຮັບຟັງການລາຍງານແລ້ວ ທ່ານ ມອນໄຊ ລາວມົວຊົ່ງ ເຫັນວ່າ : ອາຄານທ່ອງທ່ຽວ-ວັດທະນະທຳ ໃນຖານະເປັນສິ່ງປຸກສ້າງເອກະລັກໃໝ່ຂອງ ນະຄອນຫຼວງວຽງຈັນ, ໄດ້ດຳເນີນໄປຕາມກົດໝາຍ ແລະ ຖືກຕ້ອງຕາມລະບຽບການ, ມີເອກະສານອະນຸມັດຄົບຊຸດ, ການກໍ່ສ້າງດ້ວຍມາດຕະຖານສູງ, ການ ຄຸ້ມຄອງການກໍ່ສ້າງເປັນລະບຽບແບບແຜນ, ຄຸນນະພາບການກໍ່ສ້າງມີຄວາມໝັ້ນຄົງ ແລະ ໜ້າເຊື່ອຖືໄດ້ ເຊິ່ງສະແດງໃຫ້ເຫັນເຖິງລະດັບການກໍ່ສ້າງຂອງ ໂຄງການຮ່ວມມືທີ່ເປັນມິດຕະພາບລາວ-ຈີນ.

ທ່ານ ມອນໄຊ ລາວມົວຊົ່ງ ຊີ້ບອກວ່າ: ຂະແໜງການວັດທະນະທຳ ແລະ ການທ່ອງທ່ຽວ ແມ່ນທິດທາງສຳຄັນຂອງການພັດທະນາເສດຖະກິດຂອງລາວ, ອາຄານທ່ອງທ່ຽວ-ວັດທະນະທຳ ຈະຮອງຮັບໜ້າທີ່ບົດ ບາດການສະແດງວັດທະນະທຳ ແລະ ການທ່ອງທ່ຽວ, ກອງປະຊຸມທຸລະກິດ, ການຝຶກອົບຮົມບຸກຄະລາ ກອນ, ການແລກປ່ຽນວັດທະນະທຳ ແລະ ອື່ນໆ ໂດຍອາໄສຜົນປະໂຫຍດຈາກທາງລົດໄຟລາວ-ຈີນ, ຊຸກຍູ້ສົ່ງເສີມການບໍລຸງ, ສ້າງຜູ້ມີຄວາມຮູ້ຄວາມສາມາດດ້ານ ວັດທະນະທຳ ແລະ ການທ່ອງທ່ຽວ ແລະ ການຍົກລະດັບທາງດ້ານການບໍລິການຂອງລາວ. ພ້ອມດຽວກັນນັ້ນ, ຍັງໄດ້ກຳຊັບໃຫ້ທີມງານໂຄງການ ສືບຕໍ່ຮັກສາ ຄຸນນະພາບການກໍ່ສ້າງ, ຄວາມປອດໄພໃນການຜະລິດໃນໄລຍະການກໍ່ສ້າງຕໍ່ໄປ, ຍຶດໝັ້ນການກໍ່ສ້າງ ແລະ ການດຳເນີນງານຕາມກົດໝາຍ ແລະ ລະບຽບການ, ປັບປຸງສິ່ງອຳນວຍຄວາມສະດວກທີ່ກ່ຽວຂ້ອງ, ເພື່ອເຮັດໃຫ້ໂຄງການກາຍເປັນໂຄງການຕົວແບບທີ່ມີຄຸນນະພາບ, ປອດໄພ ແລະ ຍືນຍົງ.

ທ່ານ ເນັຍ ເຫຼັຍ ແລະ ທ່ານ ພັນເອກ ວັນທອງ ສິດທິກຸມ ຕາງໜ້າກຸ່ມບໍລິສັດ ໄດ້ສະແດງຄວາມຂອບໃຈຕໍ່ທ່ານ ມອນໄຊ ລາວມົວຊົ່ງ ພ້ອມດ້ວຍຄະນະ, ພ້ອມ ທັງກ່າວວ່າ, ຈະປະຕິບັດຕາມກົດໝາຍ ແລະ ລະບຽບການຂອງລາວ ແລະ ມາດຕະຖານການກໍ່ສ້າງຢ່າງເຄັ່ງຄັດ, ສືບຕໍ່ຄວບຄຸມຄຸນນະພາບການກໍ່ສ້າງຢ່າງເຂັ້ມ ງວດແລະ ຊຸກຍູ້ການກໍ່ສ້າງກ້າວໄປຂ້າງໜ້າຢ່າງໝັ້ນຄົງ, ຍຶດໝັ້ນການປະຕິບັດຕາມກົດໝາຍ ແລະ ລະບຽບການຢ່າງສະເໝີຕົ້ນສະເໝີປາຍ, ສຳເລັດການກໍ່ສ້າງ ອາຄານທ່ອງທ່ຽວ-ວັດທະນະທຳດ້ວຍຄຸນນະພາບສູງ, ເພື່ອປະກອບສ່ວນເຂົ້າໃນການພັດທະນາຂະແໜງການວັດທຸະນະທຳ ແລະ ການທ່ອງທ່ຽວຂອງລາວ ແລະ ການເສີມຂະຫຍາຍການຮ່ວມມືດ້ານວັດທະນະທຳມະນຸດຊາດ, ເສດຖະກິດ-ການຄ້າ ລະຫວ່າງລາວ-ຈີນໃຫ້ເລິກເຊິ່ງຍິ່ງຂຶ້ນ.

(ຂໍຂອບໃຈ)







